ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ

ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ

ເລກທີ 7455 /ຄກຖ

ນະຄອນຫຼວງວຽງຈັນ, ວັນທີ 31 ຕຸລາ 2025

# ແຈ້ງການ

ເຖິງ: ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ໃນຂອບເຂດທົ່ວປະເທດ ທີ່ນັບຖື.

ເລື່ອງ: ມາຮັບເອົາບັດປະຈຳຕົວ ດີຈີຕ້ອນ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ສະບັບເລກທີ 945/ປກສ, ລົງວັນທີ 03 ພຶດສະພາ 2025;
- ອີງຕາມ ແຈ້ງການ ກ່ຽວກັບການກຳນົດວັນທີ 30 ກໍລະກົດ 2025 ເປັນມື້ເປີດພິທີ ແລະ ປະກາດນຳໃຊ້ບັດປະຈຳຕົວ ດີຈີຕ້ອນ ຢ່າງເປັນທາງການ ໃນຂອບເຂດທົ່ວປະເທດ ສະບັບເລກທີ 1304/ຫສນຍ, ລົງວັນທີ 25 ກໍລະກົດ 2025.

ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ຂໍຖືເປັນກຽດແຈ້ງມາຍັງ ບັນດາທ່ານ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ຮັບຊາບທົ່ວເຖິງກັນ ກ່ຽວກັບການມາຮັບເອົາບັດປະຈຳຕົວ ດີຈີຕ້ອນ ລາຍລະອຽດມີດັ່ງນີ້:

1. ບັນດາທ່ານ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ພໍ່ແມ່ປະຊາຊົນລາວ ທີ່ໄດ້ມາເຮັດບັດປະຈຳຕົວ ດີຈີຕ້ອນ ຢູ່ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ໃນລະຫວ່າງວັນທີ 04 ສິງຫາ 2025 ຫາ 30 ກັນຍາ 2025 ໃຫ້ມາຮັບເອົາບັດປະຈຳຕົວ ດີຈີຕ້ອນ ຂອງຕົນເອງ ຢູ່ທີ່ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ (ສະໜາມມ້າ) ໃນໂມງລັດຖະການ, ນັບແຕ່ວັນທີ 03 ພະຈິກ 2025 ເປັນຕົ້ນໄປ ( ໃຫ້ຖືໃບນັດຮັບບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ ສະບັບແທ້ ມາແຈ້ງຕໍ່ເຈົ້າໜ້າທີ່ເພື່ອຮັບບັດ ).
2. ສຳລັບບຸກຄົນທີ່ມາເຮັດບັດປະຈຳຕົວ ນັບແຕ່ວັນທີ 01 ຕຸລາ 2025 ແມ່ນໃຫ້ລໍຖ້າ ແລະ ຕິດຕາມແຈ້ງການຂອງກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ຫຼື ໂທສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່ ເບີໂທ ສາຍດ່ວນ 1529.

ດັ່ງນັ້ນ, ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຊາບ.

ຫົວໜ້າກົມ

ພົຈວ. ແກ່ນຈັນ ພົມມະຈັກ